ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

=========000=========

ກະຊວງກະສິກຳ ແລະປ່າໄມ້

ກົມປ່າໄມ້

ເລກທີ 1035 /ກປມ

ນະຄອນຫຼວງວຽງຈັນ, ວັນທີ 23 APR 2010

## ຂໍ້ແນະນຳຂະແໜງປ່າໄມ້ແຂວງເພື່ອຈັດຕັ້ງປະຕິບັດການບັງຄັບໃຊ້ກົດໝາຍວ່າດ້ວຍແຮງງານ ແລະ ເອົາໃຈໃສ່ຊີ້ນຳ ບໍລິສັດ/ກອງຂຸດຄົ້ນໄມ້ໄດ້ຈັດຕັ້ງປະຕິບັດຢ່າງເຂັ້ມງວດ

- ອີງຕາມກົດໝາຍວ່າດ້ວຍແຮງງານແຫ່ງ ສ ປ ປ ລາວ 2006.
- ອີງຕາມ ກົດໝາຍ ວ່າດ້ວຍ ປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0182/ກປ, ລົງວັນທີ 23/02/2009, ວ່າດ້ວຍການສ້າງຕັ້ງກອງຂຸດຄົ້ນໄມ້ ແລະ ລັດວິສະຫະກິດຂຸດຄົ້ນໄມ້.
- ອີງຕາມຫຼັກການ ແລະ ມາດຖານ ຂອງ ອົງການສະມາດວູດ ຢູ່ ສ ປ ປ ລາວ

ເພື່ອປະຕິບັດຕາມກົດໝາຍ, ຂໍ້ຕົກລົງ ແລະ ລະບຽບການຕ່າງໆ ຂອງ ສປປ ລາວ ແລະຫຼັກການ ແລະມາດຖານການຄຸ້ມຄອງປ່າຜະລິດຂອງອົງການສາກົນ ( ສະມາດວູດ) ທັງເປັນການປະຕິບັດນະໂຍບາຍ ແລະຮັບປະກັນກ່ຽວກັບການປ້ອງກັນແຮງງານ, ສຸກຂະພາບ ແລະເຫດການອື່ນໆ ຊຶ່ງຈະເກີດຂຶ້ນຈາກການເຄື່ອນໄຫວວຽກງານການຄຸ້ມຄອງປ່າໄມ້ ຊຶ່ງນັບທັງການຂຸດຄົ້ນໄມ້

### ກົມປ່າໄມ້ ອອກຂໍ້ແນະນຳ :

1. ຂະແໜງການປ່າໄມ້ແຂວງມີໜ້າທີ່ໃນການຄຸ້ມຄອງ, ຈັດສັນປ່າໄມ້ແບບຍືນຍົງໃນຂອບເຂດແຂວງ ຂອງຕົນທີ່ຮັບຜິດຊອບ, ນອກນີ້ຍັງຮັບຜິດຊອບໃນການເອື້ອອຳນວຍກ່ຽວກັບການຢັ້ງຢືນປ່າໄມ້ຢູ່ພາຍໃນແຂວງເມື່ອເຫັນວ່າປ່າຜະລິດເຂດໃດນຶ່ງໄດ້ສະເໜີໃຫ້ອອກໃບຢັ້ງຢືນປ່າໄມ້. ບົດບາດ ແລະ ໜ້າທີ່ຂອງຂະແໜງປ່າໄມ້ ແມ່ນ ການສະເໜີໃຫ້ອອກໃບຢັ້ງຢືນປ່າໄມ້ ເມື່ອເຫັນວ່າມີຄວາມສອດຄ່ອງກັບຫຼັກການ ແລະມາດຖານທີ່ຈະສາມາດບັນລຸຜົນສຳເລັດໃນການຄຸ້ມຄອງ ແລະ ຈັດສັນປ່າໄມ້ແບບຍືນຍົງ.

2. ຂະແໜງປ່າໄມ້ແຂວງຕ້ອງໄດ້ດຳເນີນຈັດຕັ້ງປະຕິບັດວຽກຮ່ວມກັບພະແນກກະສິກຳ ແລະ ປ່າໄມ້ແຂວງເພື່ອໃຫ້ໝັ້ນໃຈໄດ້ວ່າເອກະສານຕ່າງໆທີ່ກ່ຽວຂ້ອງໄດ້ຮ່າງຂຶ້ນເປັນລາຍລັກອັກສອນເຊັ່ນ: ຮ່າງສັນຍາກ່ຽວກັບການຂຸດຄົ້ນໄມ້ ຫລື ຮ່າງເອກະສານກ່ຽວກັບວຽກງານປ່າໄມ້ຕ້ອງໄດ້ກະກຽມໃຫ້ສຳເລັດ. ບັນດາເອກະສານຕ້ອງປະກອບດ້ວຍ ສັນຍາທີ່ຜູກພັນເຖິງພັນທະຂອງພະນັກງານ ແລະກຳມະກອນທີ່ສັງກັດຢູ່ (ກອງຂຸດຄົ້ນໄມ້). ຊຶ່ງໄດ້ກຳນົດໄວ້ໃນກົດໝາຍແຮງງານປີ 2006 ທີ່ໄດ້ລະບຸເຖິງຄວາມປອດໄພ ຂອງ ແຮງງານກຳມະກອນ

3. ພັນທະຕ່າງໆທີ່ຕ້ອງການໃຫ້ກອງຂຸດຄົ້ນໄມ້ຮັບຜິດຊອບມີຄືດັ່ງນີ້:

- ຜູ້ວ່າຈ້າງ/ຜູ້ປະກອບການຕ້ອງໄດ້ສ້າງລະບຽບການພາຍໃນກ່ຽວກັບການປ້ອງກັນແຮງງານ ແລະ ສຸຂະພາບໃຫ້ອ້າຍນ້ອງກຳມະກອນປະຕິບັດຢ່າງເຄັ່ງຄັດ, ລວມເຖິງການນຳໃຊ້ມາດຕະການທີ່ຈຳເປັນໃນການປົກປັກຮັກສາ, ນຳໃຊ້ເຄື່ອງຈັກ ແລະ ການຕິດຕັ້ງເຄື່ອງອຸປະກອນປ້ອງກັນໄພຕ່າງໆ ໂດຍ ການປະກອບຄຳຄິດ ຄຳເຫັນຈາກການຈັດຕັ້ງກຳມະບານ/ສະຫະພັນກຳມະບານ ຫລືໂຕແທນ ຂອງ ສະມາຄົມການຄ້າ. ລະບຽບດັ່ງກ່າວຕ້ອງໄດ້ເຜີຍແຜ່ໃຫ້ອ້າຍນ້ອງກຳມະກອນຜູ້ອອກແຮງງານຊາບ ແລະ ຕິດປະກາດໄວ້ສະຖານທີ່ຊຸມຊົນບ່ອນເປີດເຜີຍໃຫ້ທຸກຄົນໄດ້ອ່ານ.

- ສຳເນົາເອກະສານກ່ຽວກັບລະບຽບການສະເພາະ ຂອງ ກຳມະກອນພາຍໃນຈະຕ້ອງໄດ້ນຳສົ່ງໃຫ້ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ຂະແໜງປ່າໄມ້ແຂວງ ແລະ ໜ່ວຍງານຂຸດຄົ້ນໄມ້ ບ່ອນລະໜຶ່ງສະບັບເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດ ແລະຮັບຮູ້ວັນເວລາ ທີ່ມີຜົນບັງຄັບໃຊ້.

ລະບຽບການພາຍໃນສະບັບນີ້ຈະຕ້ອງໄດ້ກຳນົດໄວ້ຄືດັ່ງນີ້:

1) ມາດຕະການທີ່ຈຳເປັນກ່ຽວກັບຄວາມປອດໄພ ແລະສຸຂະອະນາໄມຂອງແຮງງານກຳມະກອນ ໃນ ສະຖານທີ່ປະຕິບັດງານລວມທັງການກຳຈັດມົນລະພິດທາງສຽງທີ່ດັງຈົນເກີນໄປ.
2) ເອົາໃຈໃສ່ການຈັດຫານ້ຳດື່ມສະອາດ, ນ້ຳໃຊ້ເພື່ອອຸປະໂພກ, ບໍລິໂພກເປັນຕົ້ນ : ນ້ຳອາບ, ຫ້ອງນ້ຳ, ຫ້ອງອາຫານ, ກິນດື່ມ ຕະຫຼອດທັງຫ້ອງນອນ ຂອງ ອ້າຍນ້ອງກຳມະກອນໃຫ້ພ້ອມ.
3) ສາງເກັບມ້ຽນສານເຄມີທີ່ເປັນພິດ ຕ້ອງເປັນບ່ອນທີ່ມີຄວາມປອດໄພ, ບໍ່ໃຫ້ມີການຮົ່ວໄຫລ/ ຊຶມ ຊຶ່ງຈະເປັນຜົນສະທ້ອນຕໍ່ສຸຂະພາບ.
4) ຕອບສະໜອງວັດຖຸອຸປະກອນປ້ອງກັນແຮງງານໃຫ້ແກ່ອ້າຍນ້ອງກຳມະກອນ ໂດຍບໍ່ຄິດຄ່າເຊັ່ນ: ໝວກກັນກະທົບ, ເກີບ ແລະ ເຄື່ອງນຸ່ງຕາມຄວາມເໝາະສົມສຳລັບກຳມະກອນ.

5) ປະກອບເຄື່ອງອຸປະກອນປ້ອງກັນສຳລັບເຄື່ອງຈັກຮັບໃຊ້:
ຜູ້ວ່າຈ້າງຕ້ອງໄດ້ຄຳນຶ່ງເຖິງຄວາມຕ້ອງການທາງດ້ານປະສົບການ, ຄວາມຮູ້ແກ່ກຳມະກອນຕໍ່ກັບຄວາມປອດໄພຕໍ່ສຸຂະພາບ ຂອງ ເຂົາ ແລະ ຕ້ອງໄດ້ຈັດການຝຶກອົບຮົມພາກວິຊາທີ່ກ່ຽວຂ້ອງໃຫ້ເຂົາເຈົ້າ. ມາດຕະການທີ່ກ່າວມາຂ້າງເທິງນັ້ນ ແມ່ນໃຫ້ປະຕິບັດໂດຍບໍ່ຄິດຄ່າຈາກກຳມະກອນທີ່ເຂົ້າຮ່ວມການອົບຮົມ.

4. ຂະແໜງປ່າໄມ້ແຂວງຕ້ອງໄດ້ລາຍງານທຸກໆເຫດການກ່ຽວກັບອຸປະຕິເຫດທີ່ເກີດຂຶ້ນກັບກຳມະກອນຂຸດຄົ້ນໄມ້ໃຫ້ກົມປ່າໄມ້ຊາບ ພ້ອມນີ້ຍັງພົວພັນເຖິງພັນທະທີ່ຈະຕ້ອງໄດ້ລາຍງານອຸປະຕິເຫດໃນກອງຂຸດຄົ້ນໄມ້. ແຕ່ລະເດືອນ ຂະແໜງປ່າໄມ້ຕ້ອງໄດ້ລາຍງານອຸປະຕິເຫດທີ່ເກີດຂຶ້ນທັງໝົດໃຫ້ຊາບຢ່າງໜ້ອຍ 1 ຄັ້ງ/ເດືອນ

ກົດໝາຍແຮງງານ (2006), ໝວດທີ 6: ການປ້ອງກັນແຮງງານ

<u>ມາດຕາ 42. ມາດຕະການກ່ຽວກັບການຮັບປະກັນຄວາມປອດໄພປ້ອງກັນແຮງງານ ແລະ ເງື່ອນໄຂ ຂອງ ສະຖານທີ່ເຮັດວຽກ.</u>

ການປ້ອງກັນແຮງງານແມ່ນອີງໃສ່ໃນການເສີມສ້າງເງື່ອນໄຂ ແລະ ສະພາບແວດລ້ອມທີ່ດີໃຫ້ແກ່ພະນັກງານ, ກຳມະກອນເພື່ອໃຫ້ເຂົາເຈົ້າໄດ້ເຮັດວຽກຢ່າງມີປະສິດຕິຜົນສູງ, ລວມທັງມາດຕະການຕ່າງໆເພື່ອເປັນການຮັບປະກັນຄວາມປອດໄພຕໍ່ກຳມະກອນ.

ຜູ້ວ່າຈ້າງ/ຜູ້ປະກອບການຕ້ອງຮັບຜິດຊອບທຸກເຫດການທີ່ເກີດຂຶ້ນ ທັງຮັບປະກັນເຫດການໃນສະຖານທີ່ເຮັດວຽກ/ບ່ອນເຮັດວຽກ ເຊັ່ນ: ການນຳໃຊ້ເຄື່ອງຈັກ, ອຸປະກອນຕ່າງໆ ແລະ ຂະບວນການຜະລິດ ລວມທັງການນຳໃຊ້ສານເຄມີ ຕ້ອງຢູ່ພາຍໃຕ້ການດູແລເພື່ອໃຫ້ຄວາມປອດໄພ ແລະ ບໍ່ເປັນໄພອັນຕະລາຍເຖິງສຸຂະພາບ ຂອງ ອ້າຍນ້ອງກຳມະກອນ.

ຜູ້ວ່າຈ້າງ/ຜູ້ປະກອບການຕ້ອງໄດ້ສ້າງລະບຽບການສະເພາະຢູ່ພາຍໃນ ໃຫ້ອ້າຍນ້ອງກຳມະກອນປະຕິບັດຢ່າງເຄັ່ງຄັດ ເພື່ອເປັນການປ້ອງກັນແຮງງານ ແລະ ສຸຂະພາບ ຂອງ ກຳມະກອນ, ລວມເຖິງການນຳໃຊ້ເຄື່ອງຈັກ ແລະ ການປະກອບເຄື່ອງອຸປະກອນການຮັກສາຄວາມປອດໄພຕ່າງໆໂດຍ ມີການປຶກສາຫາລືກັບ ໂຕແທນ ຂອງ ສະມາຄົມການຄ້າ ຫລື ສະຫະພັນກຳມະບານ. ລະບຽບການດັ່ງກ່າວນີ້ ຕ້ອງໄດ້ທຳການເຜີຍແຜ່ໃຫ້ອ້າຍນ້ອງກຳມະກອນຮັບຮູ້ ແລະ ຕິດປະກາດໄວ້ໃນສະຖານທີ່ອ່ານໄດ້ງ່າຍ.

ມາດຕະການທີ່ຈຳເປັນກໍ່ຄືຄວາມປອດໄພ ຂອງ ແຮງງານກຳມະກອນ ແລະ ສຸຂະນາໄມ ຂອງ ກຳມະກອນໃນສະຖານທີ່ປະຕິບັດງານ ຄວນມີຄືດັ່ງນີ້:

- ຕິດຕັ້ງແສງສະຫວ່າງໃຫ້ພຽງພໍ ຫລື ໃຫ້ມີແສງສະຫວ່າງຈາກທຳມະຊາດພຽງພໍ, ການກຳຈັດສຽງດັງເກີນຂອບເຂດ, ໃຫ້ມີການລະບາຍອາກາດ ແລະ ຂີ້ຝຸ່ນ, ການປັບ ແລະ ລະບາຍກິ່ນຕ່າງໆຊຶ່ງອາດຈະເປັນອັນຕະລາຍຕໍ່ສຸຂະພາບ.

- ການຈັດຫານ້ຳດື່ມອານາໄມ, ນ້ຳໃຊ້ປະຈຳວັນ, ຫ້ອງອາບນ້ຳ, ຫ້ອງນ້ຳ, ຫ້ອງອາຫານ, ຫ້ອງກິນດື່ມ ແລະ ຫ້ອງປ່ຽນຖ່າຍເຄື່ອງນຸ່ງ ຂອງ ອ້າຍນ້ອງກຳມະກອນໃຫ້ພ້ອມ.

- ສາງເກັບມ້ຽນສານເຄມີທີ່ເປັນພິດ ຕ້ອງສ້າງໄວ້ບ່ອນປອດໄພ, ບໍ່ໃຫ້ມີການຮົ່ວໄຫລຊຶ່ງຈະເກີດຜົນສະທ້ອນຕໍ່ສຸຂະພາບຂອງກຳມະກອນ.

- ຕອບສະໜອງເຄື່ອງອຸປະກອນປ້ອງກັນອັນຕະລາຍໃຫ້ແກ່ກຳມະກອນເຊັ່ນ: ໝວກກັນກະທົບ, ເກີບ ແລະ ເຄື່ອງນຸ່ງກຳມະກອນ ໂດຍບໍ່ຄິດຄ່າ.

- ປະກອບອຸປະກອນເພື່ອປ້ອງກັນອັນຕະລາຍຂອງເຄື່ອງຈັກ ຫລື ສະຖານທີ່ຊຶ່ງຈະເກີດອັນຕະລາຍ ແລະ ສ້າງມາດຕະການໄວ້ ເພື່ອເປັນການປ້ອງກັນດ້ານອື່ນໆ ເຊັ່ນ: ຄວາມຮ້ອນ ຫລືການປ້ອງກັນໄຟຟ້າຊັອດ, ເກີດໄຟ ແລະ ອື່ນໆ ທີ່ເຫັນວ່າຈະເປັນອັນຕະລາຍແກ່ແຮງງານຫຼືກຳມະກອນ.

ຜູ້ວ່າຈ້າງ/ຜູ້ປະກອບການຍັງຕ້ອງໄດ້ຮັບປະກັນໃຫ້ຜູ້ອອກແຮງງານໄດ້ຮຽນຮູ້ຢ່າງພຽງພໍຕໍ່ກັບຄວາມປອດໄພ ແລະ ສຸຂະພາບ ຂອງ ເຂົາ ແລະ ເພື່ອນຮ່ວມງານຜູ້ອື່ນໆ,ຈັດການຝຶກອົບຮົມພາກວິຊາທີ່ກ່ຽວຂ້ອງໃຫ້ເຂົາເຈົ້າ. ມາດຕະການທີ່ກ່າວມາຂ້າງເທິງນັ້ນ ແມ່ນບໍ່ຄິດຄ່າ ກຳມະກອນ.

ກຳມະກອນທຸກຄົນຕ້ອງປະຕິບັດໜ້າທີ່ ຂອງ ຕົນຢ່າງເຄັ່ງຄັດ ແລະ ທັງຮັບປະກັນຄວາມປອດໄພ ສຸຂະພາບ ຂອງ ຕົນເອງ ແລະ ຜູ້ອື່ນໆ. ກຳມະກອນທຸກຄົນຕ້ອງໄດ້ໃຫ້ການຮ່ວມມືກັບຜູ້ປະກອບການເປັນຢ່າງດີເພື່ອດຳເນີນມາດຕະການຕ່າງໆ ໂດຍສະເພາະແມ່ນຄວາມປອດໄພ ແລະ ສຸຂະພາບ.

ຫ້າມເດັດຂາດບໍ່ໃຫ້ຜູ້ອອກແຮງງານນຳໃຊ້ສິ່ງເສບຕິດ ຫລື ສິ່ງທີ່ເປັນອັນຕະລາຍຕໍ່ສຸຂະພາບ ຂອງ ກຳມະກອນ.

<u>ມາດຕາ 43. ການກວດກາສຸຂະພາບ ແລະ ການເບິ່ງແຍງສຸຂະພາບ ຂອງ ກຳມະກອນຜູ້ອອກແຮງງານ</u>
ຫົວໜ່ວຍແຮງງານຕ່າງໆຈຳເປັນຕ້ອງໄດ້ຮຽກຮ້ອງເອົາໃບຢັ້ງຢືນການກວດກາສຸຂະພາບ, ຊຶ່ງມີຄວາມຈຳເປັນສຳລັບອ້າຍນ້ອງກຳມະກອນຜູ້ທີ່ສະໝັກເຂົ້າມາເຮັດວຽກໃໝ່ ເພື່ອຮັບປະກັນວ່າຜູ້ກ່ຽວບໍ່ມີເຊື້ອພະຍາດກ່ອນທີ່ຈະເຂົ້າມາເຮັດວຽກນຳ.ໃນກໍລະນີທີ່ຜູ້ສະໝັກງານໃໝ່ຫາກມີພະຍາດ, ຜູ້ໃຊ້ແຮງງານ ອາດບໍ່ຮັບເອົາຜູ້ກ່ຽວເຂົ້າເຮັດວຽກນຳກໍ່ເປັນໄດ້.

ຜູ້ວ່າຈ້າງ/ຜູ້ປະກອບການຈະຕ້ອງສົ່ງກຳມະກອນໄປກວດກາສຸຂະພາບຢ່າງໜ້ອຍ 1ຄັ້ງ/ປີ, ໂດຍສະເພາະແມ່ນກຳມະກອນຜູ້ທີ່ອອກແຮງງານໜັກ ຫລື ເຮັດວຽກໃນສະຖານທີ່ງມີອັນຕະລາຍຕໍ່ສຸຂະພາບ, ລະອຽດໄດ້ລະບຸໄວ້ໃນມາດຕາ 16 ຂອງ ກົດໝາຍແຮງງານ. ຖ້າທ່ານໝໍກວດພົບກຳມະກອນຜູ້ໃດຫາກມີເຊື້ອພະຍາດຊຶ່ງ ເກີດຈາກສະຖານທີ່ເຮັດວຽກແຫ່ງດັ່ງກ່າວແລ້ວ, ຜູ້ວ່າຈ້າງ/ຜູ້ປະກອບການຈະຕ້ອງຮັບພາລະໃນການໃຊ້ຈ່າຍສຳລັບການປິ່ນປົວ

ຕາມລະບຽບກົດໝາຍ. ໃນກໍລະນີທີ່ເກີດພະຍາດຕິດແປດກໍຕ້ອງໃຫ້ກຳມະກອນພັກຜ່ອນເພື່ອປິ່ນປົວ ພະຍາດຈິ່ງດີ ແລ້ວຈຶ່ງສັບຊ້ອນເຂົ້າເຮັດວຽກໃນໜ້າທີ່ເດີມຕາມປົກກະຕິ. ຄ່າໃຊ້ຈ່າຍທັງໝົດເປັນຕົ້ນຄ່າກວດສຸຂະພາບ ແລະ ຄ່າປິ່ນປົວແມ່ນເປັນພະລະ ຂອງ ຜູ້ປະກອບການ ຫລື ອົງການຮັກສາຄວາມປອດໄພຕໍ່ແຮງງານກຳມະກອນຊຶ່ງພວກເຂົາໄດ້ເຂົ້າເປັນສະມາຊິກ.

ໜ່ວຍແຮງງານກຳມະກອນທຸກໜ່ວຍຕ້ອງມີ ຖົງຢາປະຖົມພະຍາບານ. ສຳລັບທີວໜ່ວຍທີ່ມີກຳມະກອນແຕ່ 50 ຄົນຂຶ້ນໄປ ຕ້ອງມີແພດຮັບຜິດຊອບໃນການດູແລສຸຂະພາບ ຂອງ ອ້າຍນ້ອງກຳມະກອນ.

ດັ່ງນັ້ນ, ຈຶ່ງໄດ້ອອກຂໍ້ແນະນຳສະບັບນີ້ ເພື່ອເປັນບ່ອນອີງໃຫ້ແກ່ກອງ, ວິສາຫະກິດ, ໜ່ວຍງານຫຼືທີວໜ່ວຍຮັບເໝົາການຂຸດຄົ້ນໄມ້ ໄດ້ນຳໄປຈັດຕັ້ງປະຕິບັດຢ່າງເຄັ່ງຄັດ.

ຫົວໜ້າກົມປ່າໄມ້

ກະຊວງກະສິກຳແລະປ່າໄມ້ ກົມປ່າໄມ້

ຄຳໄພ ມະນີວົງ

ບ່ອນນຳສົ່ງ:

- ຂະແໜງປ່າໄມ້ແຂວງທົ່ວປະເທດ ແຂວງລະ 1 ສະບັບ
- ເກັບມ້ຽນ 1 ສະບັບ